# ພິທີເຊັນສັນຍາ
# ວ່າດ້ວຍການໃຫ້ບໍລິການ ທີ່ປຶກສາດ້ານບັນຊີ ລະຫວ່າງ ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ແລະ ບໍລິສັດ ເອີນແອນຍັງລາວ ຈໍາກັດ (EY Lao)




ທຄຕລ BCEL | EY Shape the future with confidence

**ພິທີເຊັນສັນຍາ**

ວ່າດ້ວຍການໃຫ້ບໍລິການທີ່ປຶກສາດ້ານບັນຊີ ໂຄງການຫັນການຈັດຕັ້ງປະຕິບັດມາດຕະຖານສາກົນ

SIGNING CEREMONY FOR THE ACCOUNTING ADVISORY SERVICES









## ໃນຕອນບ່າຍ ວັນຈັນ, ວັນທີ 27 ຕຸລາ 2025

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ຮ່ວມກັບ ບໍລິສັດ ເອີນແອນຍັງລາວ ຈຳກັດ (EY Lao) ໄດ້ຈັດພິທີເຊັນສັນຍາ ໂຄງການທັນການຈັດຕັ້ງປະຕິບັດມາດຕະຖານສາກົນ ດ້ານການລາຍງານການເງິນແບບເຕັມສ່ວນ ຢ່າງເປັນທາງການ ເຊິ່ງພິທີດັ່ງກ່າວໄດ້ຈັດຂຶ້ນ ເວລາ 14:00 ໂມງ ຢູ່ທີ່ ຫ້ອງປະຊຸມ ຊັ້ນ 5 ທຄຕລ ສຳນັກງານໃຫຍ່

ໃຫ້ກຽດເຂົ້າຮ່ວມງານໃນຄັ້ງນີ້ໂດຍ **ທ່ານ ນ. ພູແສງທອງ ອານຸລັກຄຳ, ຮອງຜູ້ອຳນວຍການ ທຄຕລ ແລະ Mr. Van Le, EY Lao Partner** ພ້ອມດ້ວຍຜູ້ຕາງໜ້າຈາກກົມບັນຊີ ແລະ ການເງິນ, ກົມຄຸ້ມຄອງທະນາຄານທຸລະກິດ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທະນາຄານແຫ່ງ ສປປ ລາວ, ຄະນະອຳນວຍການ, ຄະນະພະແນກ ແລະ ພະນັກງານຈາກທັງສອງພາກສ່ວນ ກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.




ທຄຕລ ໄດ້ລິເລີ່ມຈັດຕັ້ງປະຕິບັດມາດຕະຖານສາກົນ ນັບແຕ່ປີ 2010 ເພື່ອເຂົ້າຕະຫຼາດຫຼັກຊັບລາວ. ໃນປີ 2012, ພວກເຮົາກໍ່ໄດ້ວ່າຈ້າງ ບໍລິສັດ EY (ເຊິ່ງກໍ່ນຳທີມໂດຍ ທ່ານ ແອ໋ງທວງ ຈິກ) ເຂົ້າມາເປັນທີ່ປຶກສາໃນຄັ້ງທຳອິດ, ມາເຖິງປີ 2014 ທຄຕລ ຈຶ່ງສາມາດຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການບັນຊີ (IAS) ໄດ້ຢ່າງເຕັມສ່ວນ, ໂດຍໄດ້ຮັບການສະໜັບສະໜູນຢ່າງດີຈາກຜູ້ຄຸ້ມຄອງ (ກົມບັນຊີ ແລະ ການເງິນ ແລະ ສຳນັກງານ ຄຄຊ). ມາເຖິງປີ 2018, ເມື່ອຄະນະກຳມະການມາດຕະຖານສາກົນ (IASB) ໄດ້ປັບປຸງມາດຕະຖານ IAS ມາເປັນ IFRS, ໂດຍສະເພາະການມາເຖິງຂອງ IFRS 9, ໄດ້ສົ່ງຜົນໃຫ້ບົດລາຍງານການເງິນຕາມມາດຕະຖານສາກົນຂອງ ທຄຕລ ບໍ່ສາມາດຈັດຕັ້ງປະຕິບັດໄດ້ຢ່າງເຕັມສ່ວນ (ເປັນ Special Purpose).

ປັດຈຸບັນ, ທຄຕລ ແມ່ນສາມາດປະຕິບັດມາດຕະຖານລາຍງານການເງິນສາກົນໄດ້ເຕັມສ່ວນ 14 ມາດຕະຖານ, ປະຕິບັດບາງສ່ວນ 9 ມາດຕະຖານ, ແລະ ຍັງບໍ່ທັນສາມາດປະຕິບັດໄດ້ 3 ມາດຕະຖານຫຼັກ ຄື: IFRS 9, IFRS 7 ແລະ IFRS 13.

**ທ່ານ ນ. ພູແສງທອງ ອານຸລັກຄຳ,** ຮອງຜູ້ອຳນວຍການໄດ້ໃຫ້ຄຳເຫັນຄື: ໂຄງການ IFRS ນີ້ ບໍ່ແມ່ນພຽງແຕ່ໜ້າວຽກດ້ານບັນຊີ, ແຕ່ມັນແມ່ນຍຸດທະສາດຫຼັກຂອງ ທຄຕລ ເພື່ອກ້າວສູ່ມາດຕະຖານສາກົນ. ພ້ອມກັນນັ້ນ, ຍັງເປັນພັນທະໃນການປະຕິບັດຕາມລະບຽບການຂອງຜູ້ຄຸ້ມຄອງ. ເວົ້າລວມແລ້ວ, ການຈັດຕັ້ງປະຕິບັດມາດຕະຖານສາກົນ ກໍ່ເປັນການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ຂອງຄະນະພັກຮາກຖານ ທຄຕລ ກໍ່ຄື ມະຕິກອງປະຊຸມຂອງອົງຄະນະພັກທະນາຄານແຫ່ງ ສປປ ລາວ ໃຫ້ເປັນຮູບປະທຳ.

ໂຄງການທັນການຈັດຕັ້ງປະຕິບັດມາດຕະຖານສາກົນ ດ້ານການລາຍງານການເງິນ ແບບເຕັມສ່ວນທີ່ເຮົາເຊັນສັນຍາໃນມື້ນີ້ ຈະແບ່ງອອກເປັນ 3 ໄລຍະຫຼັກ: **ໄລຍະທີ 1:** ໄລຍະເລີ່ມຕົ້ນ ການວາງແຜນ, ແລະ ການຝຶກອົບຮົມ; **ໄລຍະທີ 2:** ການສະໜັບສະໜູນດ້ານວິຊາການ (Technical Support); **ໄລຍະທີ 3:** ການສະໜັບສະໜູນຫຼັງການຈັດຕັ້ງປະຕິບັດ. ໂຄງການນີ້ ຈະເລີ່ມດຳເນີນການຢ່າງເປັນທາງການຕັ້ງແຕ່ເດືອນຕຸລາ 2025 ນີ້ ແລະ ຄາດວ່າຈະສຳເລັດພາຍໃນທ້າຍເດືອນມິຖຸນາ 2026.